ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 23/04/2019

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 09 ເມສາ 2019 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ບຸນອຸ້ມ ສີວັນເພັ່ງ ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມ; ເນື່ອງຈາກ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ບໍລິສັດ ຕິດພາລະກິດ ບໍ່ສາມາດເຂົ້າຮ່ວມໄດ້, ຈຶ່ງມອບສິດໃຫ້ແກ່ ທ່ານຮອງປະທານສະພາບໍລິຫານດຳເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 138 ທ່ານ ແລະ ມອບສັນທະຈຳນວນ 228 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 366 ທ່ານ ຖືຮຸ້ນລວມກັນທັງໝົດ 1.517.525.005 ຮຸ້ນ ເທົ່າກັບ 90,37 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງ ບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ບຸນອຸ້ມ ສີວັນເພັ່ງ**	ຕຳແໜ່ງ:	ຮອງປະທານສະພາບໍລິຫານບໍລິສັດ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ນາງ ລັດຕະນາ ປະທຸມວັນ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ບຸນມາ ມະນີວົງ**	ຕຳແໜ່ງ:	ກຳມະການສະພາບໍລິຫານ;
4. **ທ່ານ ນາງ ວານິດາ ສະຫວັດດີ**	ຕຳແໜ່ງ:	ກຳມະການສະພາບໍລິຫານ / ຮອງຫົວໜ້າກົມຄຸ້ມຄອງການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ;
5. **ທ່ານ ສີຈາດ ບຸດຊາກິດຕິລາດ**	ຕຳແໜ່ງ:	ກຳມະການສະພາບໍລິຫານ / ຫົວໜ້າກົມຄຸ້ມຄອງພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;

6. **ທ່ານ ຣສ. ປອ. ກອງສີ ແສງມະນີ** ຕຳແໜ່ງ: ກຳມະການອິດສະຫຼະ/ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ;

7. **ທ່ານ ສຈ. ປອ. ຄຳລືຊາ ນອນສະຫວັນ** ຕຳແໜ່ງ: ກຳມະການອິດສະຫຼະ/ຫົວໜ້າກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ;

8. **ທ່ານ ຣສ. ຄຳເຜີຍ ພົມມະຈັນ** ຕຳແໜ່ງ: ກຳມະການອິດສະຫຼະ/ຫົວໜ້າຫ້ອງການແຜນການການເງິນ, ມະຫາວິທະຍາໄລແຫ່ງຊາດ;

ອົງປະຊຸມ ມີ 8 ທ່ານ, ຂາດປະຊຸມ 1 ທ່ານ ເນື່ອງຈາກຕິດພາລະກິດ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຄື: ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ, ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຜູ້ກວດສອບບັນຊີພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
  * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
  * ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ

ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນ ແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງ ຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນ ຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງ ປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງ ກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດໃນ ຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ເວລາຕໍ່ມາ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໂດຍ ໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອ ໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວຄື: ກ່ຽວກັບວາລະທີ 1,2,3,4,5,6,7,9 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ. ແລະ ກ່ຽວກັບວາລະທີ 8 ແມ່ນກຳລັງຢູ່ ໃນໄລຍະການຈັດຕັ້ງປະຕິບັດ, ເນື່ອງຈາກເປັນແຜນພັດທະນາທຸລະກິດ ຂອງບໍລິສັດ ຈາກປີ 2016-2025.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານຜົນການຈັດຕັ້ງປະ ຕິບັດມະຕິກອງປະຊຸມດັ່ງກ່າວ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ຮັບຊາບຕາມການລາຍງານ ຂອງ ຜູ້ອຳນວຍການໃຫຍ່ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາທຸກປະການ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017, ໄດ້ປະຊຸມເມື່ອວັນທີ 06 ເມສາ 2018 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບລິຫານ ໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017, ວັນທີ 06 ເມສາ 2018, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2018 (01/01/2018-30/06/2018) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2012 ເມື່ອວັນທີ 22 ເມສາ 2013; ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດໃນ 6 ເດືອນຕົ້ນປີ 2018 ມີກຳໄລສຸດທິປະມານ 95,39 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ.

ບໍລິສັດ ໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2018 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນທີ່ໄດ້ກຳນົດສິດ ຂອງ ຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **19 ກັນຍາ 2018** ໃນອັດຕາ **110** ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **184,72** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ **3 ຕຸລາ 2018.**

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2018 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ແລະ ຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 19 ກັນຍາ 2018 ໃນອັດຕາຮຸ້ນລະ 110 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 184,72 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 3 ຕຸລາ 2018 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2019.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2019 ຊຶ່ງມີດັ່ງລຸ່ມນີ້:

ໃນປີ 2018 ການດຳເນີນທຸລະກິດຂອງ ບໍລິສັດ ໄດ້ມີການປັບປຸງການຄຸ້ມຄອງບໍລິຫານພາຍໃນ ບໍລິສັດ ເພື່ອໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດ ຫລັກຊັບລາວ, ແລະ ເຂົ້າໄປຖືຮຸ້ນໃນ 5 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ເຮັດໃຫ້ມີທຶນຈົດທະບຽນ 6.717.214.788.000 ກີບ, ມີຮຸ້ນທັງໝົດ 1.679.303.697 ຮຸ້ນ. ການດຳເນີນທຸລະກິດ ໃນປີ 2018 ມີດັ່ງນີ້:

- ການຜະລິດທັງໝົດ 5.081,87 GWh
- ລາຍຮັບ 1.143,34 ຕື້ກີບ
- ບໍລິສັດມີກຳໄລສຸດທິທັງໝົດປະມານ 74,79 ຕື້ກີບ
- ບຸກຄະລາກອນທັງໝົດມີ 689 ຄົນ, ມີຍິງ 118 ຄົນ

ສະເພາະລາຍງານການເງິນຂອງບໍລິສັດປີ 2018 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ, ມີລາຍລະອຽດໃນໜັງສືແຈ້ງເຊີນ ແລະໄດ້ເປີດເຜີຍໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ພ້ອມກັນນັ້ນ ໄດ້ສ້າງຕັ້ງບໍລິສັດບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອນເຈັນ ຈຳກັດ (EDL-GEN O&M), ຊຶ່ງເປັນບໍລິສັດລູກຂອງບໍລິສັດ, ເປັນການລົງທຶນ 100 ສ່ວນຮ້ອຍຂອງບໍລິສັດ, ຈຸດປະສົງໃນ ການສ້າງຕັ້ງບໍລິສັດ EDL-GEN O&M ເພື່ອ:

- ໃຫ້ບໍລິການໃນດ້ານການຄຸ້ມຄອງ ແລະ ບຳລຸງຮັກສາເຂື່ອນຕ່າງໆ.
- ໃຫ້ບໍລິການການສ້ອມແປງເຄື່ອງຈັກຂະໜາດນ້ອຍ ແລະ ຂະໜາດໃຫຍ່ຢູ່ພາຍໃນເຂື່ອນ ແລະ ສະຖານີ.
- ໃຫ້ບໍລິການສະໜອງວິຊາການ, ວິສະວະກອນ, ຜູ້ຊ່ຽວຊານໃຫ້ກັບເຂື່ອນຕ່າງໆ ແລະ ສະຖານີ.

ບໍລິສັດ EDL-GEN O&M ມີແຜນຈະໄປຮັບບໍລິການຄຸ້ມຄອງ ແລະ ບຳລຸງຮັກສາໃນບັນດາ ໂຄງການເຂື່ອນ IPP ທີ່ຢູ່ໃນໄລຍະກໍ່ສ້າງ, ເຂື່ອນ IPP ທີ່ຢູ່ໃນໄລຍະການເຮັດ Operation/ Maintenance, ປັດຈຸ ບັນກຳລັງກະກຽມວິຊາການທີ່ມີຄຸນວຸດທິ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ ເພື່ອປະກອບຮັບບໍລິການຄຸ້ມຄອງ ແລະ ບຳລຸງຮັກສາໃຫ້ໂຄງການດັ່ງກ່າວ.

ນອກຈາກນັ້ນ ບໍລິສັດຍັງໄດ້ປະຕິບັດຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ໄດ້ມອບຜັນທະ ໃຫ້ລັດຖະບານ ປະກອບມີຄ່າພາກຫຼວງ 1 ສ່ວນຮ້ອຍ ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10 ສ່ວນຮ້ອຍ, ອາກອນເງິນປັນຜົນ 10 ສ່ວນຮ້ອຍ ແລະ ອາກອນລາຍໄດ້ຂອງບຸກຄົນ ລວມທັງໝົດປະມານ 119,91 ຕື້ ກີບ.

ອີກດ້ານໜຶ່ງບໍລິສັດໄດ້ໃຫ້ຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນໃຫ້ນັບມື້ ນັບເຂັ້ມແຂງ ມີຄວາມຮູ້ຄວາມສາມາດ ເພື່ອກ້າວໄປເຖິງທຽບເທົ່າກັບສາກົນ.

ພ້ອມກັນນັ້ນ ວຽກງານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ປະກອບສ່ວນເປັນຈຳນວນຫລາຍ ສົມຄວນ ພ້ອມທັງໄດ້ສ້າງກິດຈະກຳຮ່ວມກັບຊາວບ້ານອ້ອມຂ້າງເຂື່ອນທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້

ແລະ ປ່ອຍປາ, ມອບອຸປະກອນການສຶກສາໃຫ້ໂຮງຮຽນອ້ອມຂ້າງເຂື່ອນໄຟຟ້າ, ມອບອຸປະກອນການແພດໃຫ້ສຸກສາລາ ແລະ ບໍລິຈາກເຄື່ອງນຸ່ງຫົ່ມໃຫ້ປະຊາຊົນທີ່ຂາດເຂີນຢູ່ອ້ອມຂ້າງເຂື່ອນ; ລວມເປັນເງິນທັງໝົດປະມານ 3,18 ຕື້ກີບ ລາຍ ລະອຽດມີໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ໃນປີ 2019, ບໍລິສັດຈະປະຕິບັດວຽກງານ ແລະດຳເນີນທຸລະກິດໂດຍອີງຕາມນະໂຍບາຍອັນຊັດເຈນ ຂອງບໍລິສັດໃນການຕອບສະໜອງເງິນປັນຜົນຢ່າງສົມເຫດສົມຜົນໃຫ້ຜູ້ຖືຮຸ້ນ ພ້ອມທັງເຮັດໃຫ້ການດຳເນີນທຸລະກິດ ການຜະລິດກະແສໄຟຟ້າມີຄວາມໝັ້ນຄົງຢ່າງຕໍ່ເນື່ອງ ແລະ ບໍລິສັດຈະໄດ້ສືບຕໍ່ວາງແຜນການດຳເນີນທຸລະກິດດ້ວຍຕົວ ເລກຄາດໝາຍທີ່ອາດມີຄວາມເປັນໄປໄດ້ໃນເບື້ອງລາຍຮັບ ແລະ ໄດ້ວາງຕົວເລກຄາດໝາຍຢ່າງຮັດກຸມໃນເບື້ອງລາຍ ຈ່າຍ. ຄາດວ່າບໍລິສັດມີແຜນຈະສືບຕໍ່ລົງທຶນໃນບັນດາເຂື່ອນໄຟຟ້າຕ່າງໆ ເຊັ່ນ:

1). ໂຄງການທີ່ລັດວິສາຫະກິດໄຟຟ້າລາວລົງທຶນ.
2). ໂຄງການທີ່ລັດວິສາຫະກິດໄຟຟ້າລາວເຂົ້າຖືຮຸ້ນ
3). ໂຄງການທີ່ບໍລິສັດມີແຜນຈະລົງທຶນ ແລະ ເຂົ້າຮ່ວມທຶນກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ.

ລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບ ລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບ ຮອງເອົາບົດລາຍງານການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ລວມທັງລາຍງານການເງິນ ຂອງບໍລິສັດ 6 ເດືອນຕົ້ນ ປີ 2018 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2019.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ທ່ານປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານ ຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2018 ແລະ ແຜນການດຳ ເນີນທຸລະກິດ ຂອງ ບໍລິສັດ ປີ 2019 ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາບົດລາຍງານຜົນການດຳເນີນ ທຸລະກິດຂອງບໍລິສັດ ປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2019, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. **ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018).**

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ອີງຕາມກົດລະບຽບ ຂອງ ບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ໜຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງຫັກເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດ ມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 ເປັນເງິນຈຳນວນທັງໝົດ **74,79** ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ 6 ເດືອນທ້າຍປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນຊຸມປີຜ່ານມາ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **24 ເມສາ 2019** ໃນອັດຕາ **160** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **268,68** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **09 ພຶດສະພາ 2019.**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 ດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມແຕ່ຢ່າງໃດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການຈ່າຍເງິນປັນຜົນຈາກ ຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນຊຸມປີຜ່ານມາ, ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 24 ເມສາ 2019 ໃນອັດຕາຮຸ້ນລະ 160 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 268,68 ຕື້ກີບ ແລະກຳນົດຈ່າຍເງິນປັນຜົນໃນວັນ**

ທີ 09 ພຶດສະພາ 2019. ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.519.334.938 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2019.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2019 ໂດຍ ບໍລິສັດ ສະເໜີແຕ່ງຕັ້ງຜູ້ກວດສອບບັນຊີຄື: ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສຳລັບປີ 2019, ເນື່ອງຈາກວ່າ ບໍລິສັດ PWC ຊະນະການປະກວດລາຄາ ແລະ ໃນໄລຍະຜ່ານມາ ບໍລິສັດ PWC ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດແຕ່ປີ 2011-2015 ໃນຖານະທີ່ເປັນຜູ້ກວດສອບບັນຊີອິດສະຫລະ ເຫັນວ່າບໍລິສັດດັ່ງກ່າວມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີຂອງບໍລິສັດ; ໂດຍໄດ້ມີການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ສຳລັບປີ 2019 ເປັນຈຳນວນເງິນບໍ່ເກີນ 771.931.600 ກີບ. (ມີລາຍລະອຽດໃນໜັງສືແຈ້ງເຊີນທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ).

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກ ປີ 2019, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2019, ໂດຍຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກສຳລັບປີ 2019 ເປັນຈຳນວນເງິນບໍ່ເກີນ 771.931.600 ກີບ, ດ້ວຍຄະ

ແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.519.334.938 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອເປັນການສືບຕໍ່ຂະຫຍາຍທຸລະກິດ ຂອງ ຜ-ຟຟລ ໃຫ້ເຕີບໃຫຍ່ຕາມແຜນພັດທະນາຂອງບໍລິສັດ, ສະເໜີກອງປະຊຸມພິຈາລະນາ ແລະ ອະນຸມັດການລົງທຶນໃນທຸລະກິດສຳຮອງ ຄື: ລົງທຶນໃນໂຄງການ EDL-Gen Energy Complex Plaza, ໂດຍຊັດສ່ວນການຮ່ວມທຶນຂອງ 3 ຂາຮຸ້ນ ປະກອບມີ: (1) EDL-Gen ຈຳນວນ 80 ສ່ວນຮ້ອຍ; (2) AVIC-INTL Project Engineering Company (AVIC) ຈຳນວນ 10 ສ່ວນຮ້ອຍ; (3) Guizhou Transportation Planning Survey & Design Academe Co., LTD (GSDC) ຈຳນວນ 10 ສ່ວນຮ້ອຍ, ທຶນຈົດທະບຽນໃນການສ້າງຕັ້ງບໍລິສັດ EDL-Gen Energy Complex Plaza ເທົ່າກັບ 18 ລ້ານໂດລາສະຫະລັດ.

ທີ່ຕັ້ງຂອງໂຄງການ: ຕັ້ງຢູ່ຖະໜົນອາຊຽນ, ໜ່ວຍ 10, ບ້ານ ສີບຸນເຮືອງ, ເມືອງ ຈັນທະບຸລີ, ນະຄອນຫລວງວຽງຈັນ. ມີເນື້ອທີ່ດິນ 12,552 ແມັດກາເລ້.

ຈຸດປະສົງຫລັກຂອງໂຄງການ: ເພື່ອລົງທຶນ, ພັດທະນາກໍ່ສ້າງ ແລະ ບໍລິຫານໂຄງການ, ໂຄງການນີ້ມີທັງໝົດ 16 ຊັ້ນ ໃນນີ້ຈະເຮັດເປັນຫ້ອງການສຸນການຄ້າ, ຫ້ອງປະຊຸມ ແລະ ມີສະຖານທີ່ຈອດລົດຊັ້ນໃຕ້ດິນ 2 ຊັ້ນເຄິ່ງ ສາມາດຮັບຮອງຈອດລົດໄດ້ປະມານ 1.300 ຄັນ. ມູນຄ່າຂອງໂຄງການເທົ່າກັບປະມານ 75,19 ລ້ານໂດລາສະຫະລັດ.

ຜົນຂອງການສຶກສາຄວາມເປັນໄປໄດ້ໃນການກໍ່ສ້າງໂຄງການເຫັນວ່າ ອັດຕາຜົນຕອບແທນ ຂອງໂຄງການ 13,62 ສ່ວນຮ້ອຍ, ຈະໃຊ້ເວລາໃນການກໍ່ສ້າງປະມານ 2 ປີ ແລະ ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບມີດັ່ງນີ້:

- ໄດ້ຮັບຈາກຄ່າເຊົ່າດິນ 15,06 ລ້ານສະຫະລັດ/30 ປີ.
- ໄດ້ຮັບເງິນປັນຜົນ 80 ສ່ວນຮ້ອຍຂອງຈຳນວນເງິນປັນຜົນຂອງແຕ່ລະປີ.
- ທີ່ດິນຍັງຄົງເປັນຊັບສິນຂອງ ຜ-ຟຟລ ຄືເກົ່າ, ເຊິ່ງທີ່ດິນດັ່ງກ່າວຈະມີມູນຄ່າເພີ່ມຂຶ້ນເນື່ອງຈາກເປັນເຂດດ້ານການພັດທະນາທຸລະກິດ.

ແລະ ສະເໜີກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນ ດັ່ງກ່າວເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າໂຄງການ ແລະ ລາຍ

ລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕີກລົງ, ການດຳເນີນການ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໂຄງການດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາຮ່ວມຮຸ້ນ, ສັນຍາເງິນກູ້ ແລະ ສັນຍາ ກໍ່ສ້າງໂຄງການ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນ ແກ່ໜ່ວຍງານຂອງລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງ ຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງ ເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວ ໄດ້ທຸກຢ່າງຈົນ ສຳເລັດ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດການ ລົງທຶນໃນໂຄງການ EDL-Gen Energy Complex Plaza ແລະ ການມອບອຳນາດໃຫ້ສະພາບໍລິຫານຕາມທີ່ໄດ້ ສະເໜີດັ່ງກ່າວຂ້າງເທິງທຸກປະການ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີ ຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການລົງທຶນໃນ ໂຄງການ EDL-Gen Energy Complex Plaza ແລະ ການມອບອຳນາດດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງ ລົງມະຕິອະນຸມັດ ດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີ ຮຸ້ນລວມກັນຢ່າງໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza, ໂດຍຊັດສ່ວນການຮ່ວມທຶນຂອງ 3 ຂາ ຮຸ້ນ ປະກອບມີ: (1) EDL-Gen ຈຳນວນ 80 ສ່ວນຮ້ອຍ; (2) AVIC-INTL Project Engineering Company (AVIC) ຈຳນວນ 10 ສ່ວນຮ້ອຍ; (3) Guizhou Transportation Planning Survey & Design Academe Co., LTD (GSDC) ຈຳນວນ 10 ສ່ວນຮ້ອຍ. ທຶນຈົດທະບຽນໃນການສ້າງຕັ້ງບໍລິສັດ EDL-Gen Energy Complex Plaza ເທົ່າກັບ 18 ລ້ານໂດລາສະຫະລັດ. ທີ່ຕັ້ງ ຂອງໂຄງການ: ຕັ້ງຢູ່ຖະໜົນອາຊຽນ, ໜ່ວຍ 10, ບ້ານ ສີບຸນເຮືອງ, ເມືອງຈັນທະບຸລີ,**

ນະຄອນຫລວງວຽງຈັນ. ມີເນື້ອທີ່ດິນ 12,552 ແມັດກາເລ, ມູນຄ່າຂອງໂຄງການເທົ່າກັບປະມານ 75,19 ລ້ານໂດລາສະຫະລັດ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນ ດັ່ງກ່າວເປັນຜູ້ມີອຳນາດໃນການຕີຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າໂຄງການ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕີກລົງ, ການດຳເນີນການ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໂຄງການດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາຮ່ວມຮຸ້ນ, ສັນຍາເງິນກູ້ ແລະ ສັນຍາກໍ່ສ້າງໂຄງການ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕີຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານຂອງລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວ ໄດ້ທຸກຢ່າງຈົນສຳເລັດ, ກອງປະຊຸມໄດ້ອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດດັ່ງນີ້:

(ກ) ຈຳນວນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີຈຳນວນ 365 ຄົນ, ເທົ່າກັບ 99,180 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີຈຳນວນ 5 ຄົນ, ເທົ່າກັບ 0,819 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນສຽງ (ຮຸ້ນ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.506.883.614 ສຽງ (ຮຸ້ນ), ເທົ່າກັບ 89,732 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ 12.451.324 ສຽງ (ຮຸ້ນ), ເທົ່າກັບ 0,741 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາຄົບວາລະການປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ, ແລະ ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຮອດເວລາປິດກອງປະຊຸມ, ມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 140 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 230 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 370 ຄົນ ຖືຮຸ້ນລວມກັນ 1.519.334.938 ຮຸ້ນ ເທົ່າກັບ 90,46 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ທີ່ມີກຽດທຸກໆ ທ່ານ, ເນື່ອງໃນໂອກາດປີໃໝ່ລາວ ພສ 2562 ທີ່ໃກ້ຈະມາເຖິງນີ້, ຂ້າພະເຈົ້າຂໍອວຍພອນໄຊບັນດາທ່ານຜູ້ຖືຮຸ້ນ, ຄະນະສະພາບໍລິຫານບໍລິສັດ, ກອງເລຂາຕ່າງໆ ຈົ່ງມີສຸຂະພາບເຂັ້ມແຂງແຂງແຮງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ຈົ່ງມີສຸຂະພາບເຂັ້ມແຂງ ຕະຫຼອດໄປ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:00 ໂມງ.

ປະທານກອງປະຊຸມ

ບຸນອຸ້ມ ສີວັນເພັ້ງ

ຮັບຮອງຖືກຕ້ອງ

ລັດຕະນາ ປະທຸມວັນ